ວາລະສານວິທະຍາສາດສັງຄົມ (ວວສ) ສະບັບ 24, ຊຸດທີ 1 (2024) 124-130

ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ
ISSN: 2664-6331 Homepage: https://ssj.sjnl.la/
https://doi.org/10.71026/ss.2024.01013



# ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ

ແກ້ວມະນີ ມາກວິໄລ, ລີນ່າ ພອນມາເຈດີ, ຄຳແພງ ບຸດມີໄຊ, ພຸດສາຄອນ ຈັນງາຄຳ, ວິໄລວັນ ຈຸນດາລາ
ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ
Email: keomany@nuol.edu.la

**ຂໍ້ມູນບົດຄວາມ** ວັນທີສົ່ງ 25/2/2023 ວັນທີປັບປຸງຄັ້ງທີ 25/3/2024 ວັນທີຕອບຮັບ 28/6/2024

**ບົດຄັດຫຍໍ້**

ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງເພື່ອ 1) ເພື່ອສຶກສາປັດໄຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ; 2) ເພື່ອສຶກສາຂໍ້ສະເໜີແນະໃນການແກ້ໄຂການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ. ກຸ່ມຕົວຢ່າງແມ່ນຄູສອນ 51 ຄົນ ແລະ ນັກຮຽນເພດຍິງ 334 ຄົນ ໃນຂັ້ນມັດທະຍົມຕົ້ນໃນເມືອງເລົ່າງາມ ແຂວງ ສາລະວັນ ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນເປັນແບບສອບຖາມ ແບບມາດຕາສ່ວນປະມານຄ່າ 5 ລະດັບ ໃນ 4 ດ້ານຄື: 1) ປັດໄຈສ່ວນຕົວຂອງນັກຮຽນ; 2) ປັດໄຈດ້ານສະພາບແວດລ້ອມໃນໂຮງຮຽນ; 3) ປັດໄຈດ້ານສະພາບຄອບຄົວ ແລະ 4) ປັດໄຈດ້ານວັດທະນະທຳ-ສັງຄົມ. ການວິເຄາະຂໍ້ມູນໂດຍໃຊ້ໂປຼແກຼມຄອມພິວເຕີສຳເລັດຮູບ ຫາຄ່າຄວາມຖີ່ ແລະ ສ່ວນຮ້ອຍ, ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (S.D) ແລະ ວິເຄາະຂໍ້ມູນແບບປາຍເປີດແບບລຽງຄວາມກ່ຽວກັບປັດໄຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ. ຜົນການຄົ້ນຄວ້າພົບວ່າ: ປັດໄຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ ຕາມຄວາມຄິດເຫັນຂອງຄູສອນໂດຍລວມ ແລະ ແຕ່ລະດ້ານຢູ່ໃນລະດັບໜ້ອຍ ຍົກເວັ້ນດ້ານປັດໄຈດ້ານວັດທະນະທຳ-ສັງຄົມ ແມ່ນຢູ່ໃນລະດັບໜ້ອຍທີ່ສຸດ ສ່ວນປັດໄຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ ຕາມຄວາມຄິດເຫັນຂອງນັກຮຽນພົບວ່າ ໂດຍລວມ ແລະ ທຸກດ້ານຢູ່ໃນລະດັບໜ້ອຍ ຍົກເວັ້ນດ້ານ ປັດໄຈດ້ານສະພາບຄອບຄົວ ແມ່ນຢູ່ໃນລະດັບປານກາງ.

**ຄຳສັບສຳຄັນ:** ປັດໄຈ, ການປະລະການຮຽນ, ນັກຮຽນເພດຍິງ, ການແກ້ບັນຫາການປະລະການຮຽນ

# Female student' Drop-outs of Lower Secondary School in Laongam District Salavanh Province

Keomany MAKVILAY, Lena PHONEMAJEDY, Khampheng BOUDMYXAY, Phoutsakhone CHANNGAKHAM, Vilayvanh CHOUNDALA
Faculty of Education, National University of Laos
**Corresponding Author:** Keomany MAKVILAY, Email: keomany@nuol.edu.la

**Abstract**

This research was intended to study: 1) to study factor influencing female student' drop-outs in lower secondary school in Laongam district Salavanh province; 2) to study the recommendation regarding to female student drop-out solving issues in lower secondary school in Laongam district Salavanh province. The sample group consist of 51 teachers and 334 female students in lower secondary school in Laongam district Salavanh province. The research instrument was a 5-point Likert scale questionnaire conceptualized in terms four factors such as 1) Stuents' personal factors, 2) School

environment factors, 3) Family's factors and 4) Culture and community factors. Data analysis was performed by the statistical package software to find out frequency, percentage, mean ($\overline{X}$), standard deviation (S.D) and a content analysis for the responses from the open-ended questions.

The results were as follows 1) the factors which affecting to female student' drop-outs in lower secondary school in Laongam district Salavanh province according to teachers' perception overall and most factors found small influence except Culture and community factors was found smallest influence while the factors which affecting to female student' drop-outs in lower secondary school in Laongam district Salavanh province according to stuents' perception overall and most factors found found small influence except family factors was neutal influence.

**Keywords**: Factors, female student drop-out, female stuents drop-out solvingissues

**ພາກສະເໜີ**

ໄລຍະທີ່ຜ່ານມາເຖິງວ່າລັດຖະບານຈະໄດ້ເອົາໃຈໃສ່ລົງທຶນເຂົ້າໃນການຈັດຕັ້ງປະຕິບັດບັດດາຄາດໝາຍ ແລະ ກິດຈະກຳຕ່າງໆໃນຂະແໜງການສຶກສາ ແລະ ກິລາກໍ່ຕາມແຕ່ກໍ່ຍັງເຫັນວ່າການພັດທະນາຍັງຊັກຊ້າ ແລະ ຄຸນນະພາບກໍ່ຍັງຕໍ່າທຽບໃສ່ບັນດາປະເທດໃນພາກພື້ນ (ກະຊວງສຶກສາທິການ ແລະ ກິລາ, 2015) ແລະ ເຖິງວ່າການຈັດຕັ້ງປະຕິບັດຕາມແຜນພັດທະນາຂະແໜງການສຶກສາແຕ່ປີ 2016-2020 ທີ່ຜ່ານມາ ຈະມີຜົນສຳເລັດຢ່າງຫຼວງຫຼາຍແຕ່ເຫັນວ່າການພັດທະນາຍັງແຕກໂຕນກັນລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະຫວ່າງເມືອງທຸກຍາກ ແລະ ເມືອງບໍ່ທຸກຍາກ ແລະ ລະຫວ່າງກຸ່ມປະຊາກອນໃນກຸ່ມພາສາທີ່ແຕກຕ່າງກັນ, ອັດຕາການເລື່ອນຊັ້ນຈາກປະຖົມໄປສູ່ມັດທະຍົມຕອນຕົ້ນຕໍ່າ ແລະ ອັດຕາການປະລະຢູ່ໃນຂັ້ນຕົ້ນຂອງມັດທະຍົມຕອນຕົ້ນເພີ່ມຂຶ້ນ (ກະຊວງສຶກສາທິການ ແລະ ກິລາ, 2020, ໜ້າ. 10) ໃນນັ້ນເຫັນວ່າບັນຫາການປະລະການຮຽນຂອງນັກຮຽນໃນແຕ່ລະຂັ້ນຍັງຢູ່ໃນລະດັບສູງໂດຍສະເພາະແມ່ນຢູ່ໃນ 40 ເມືອງທຸກຍາກທີ່ດ້ອຍໂອກາດທີ່ສຸດທາງດ້ານການສຶກສາຂອງປະເທດຊຶ່ງເປັນບ່ອນໄດ້ຮັບດ້ານການສຶກສາຕໍ່າທີ່ສຸດ (ກະຊວງສຶກສາທິການ ແລະ ກິລາ, 2020, ໜ້າ. 20). ຕະຫຼອດໄລຍະ 5 ປີທີ່ຜ່ານມາການພັດທະນາການສຶກສາເຖິງວ່າຈະມີຂໍ້ຈຳກັດຫຼາຍດ້ານກໍ່ຕາມແຕ່ອັດຕາການເຂົ້າຮຽນ, ການເລື່ອນຂັ້ນ, ເລື່ອນຊັ້ນຂອງນັກຮຽນກໍ່ຍັງສືບຕໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງຊັດເຈນ. ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ຈະເພີ່ມຂຶ້ນຈາກ 82.2% ໃນສົກຮຽນ 2015-2016 ມາເປັນ 83.3% ເຖິງ ອັດຕາການເຂົ້າຮຽນຈະສູງຂຶ້ນແຕ່ກໍ່ຍັງບໍ່ສາມາດບັນລຸເປົ້າໝາຍ, ນອກຈາກນັ້ນ, ບັນຫາການປະລະການຮຽນກໍ່ຍັງຢູ່ໃນລະດັບສູງຂຶ້ນທຸກປີຕາມລຳດັບ ແລະ ມີຄວາມບໍ່ສະເໝີພາບກັນລະຫວ່າງເພດຍິງ ແລະ ຊາຍ ເຊັ່ນໃນສົກປີ 2019-2020 ກໍ່ເຫັນວ່າອັດຕາການປະລະຊັ້ນມັດທະຍົມຕອນຕົ້ນລວມທົ່ວປະເທດສູງເຖິງ10.3% ເພດຍິງ 9.7% ໃນນັ້ນສູງທີ່ສຸດແມ່ນຂັ້ນມ.1ຈຳນວນ 12.3% ຍິງ11.1% (ສູນສະຖິຕິການສຶກສາ ແລະ ກິລາ, 2020, ໜ້າ. 39) ເຮັດໃຫ້ຊ່ວງໄລຍະ 2021-2025 ກະຊວງສຶກສາທິການ ແລະ ກິລາ ຈະເນັ້ນໃສ່ຫຼຸດຜ່ານຄວາມແຕກໂຕນ ແລະ ປັບປຸງຜົນການຮຽນໃນຊັ້ນປະຖົມໃຫ້ດີຂຶ້ນເມື່ອຜົນການຮຽນຕໍ່າໃນຊັ້ນປະຖົມສຶກສາຈະມີຜົນກະທົບຕໍ່ຊັ້ນມັດທະຍົມ, ເຮັດໃຫ້ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດເອົາ 40 ເມືອງທີ່ດ້ອຍໂອກາດທີ່ສຸດທາງດ້ານການສຶກສາຂອງປະເທດຊຶ່ງເປັນບ່ອນທີ່ມີຜົນໄດ້ຮັບດ້ານການສຶກສາຕໍ່າທີ່ສຸດ ບັນດາເມືອງເຫຼົ່ານີ້ຍັງທຸກຍາກຫຼາຍຊຶ່ງປະກອບດ້ວຍຄອບຄົວທີ່ຂາດດ້ານສະບຽງອາຫານເປັນບູລິມະສິດຂອງແຜນພັດທະນາການສຶກສາ ແລະ ກິລາ 2021-2025 ແມ່ນເພື່ອຫຼຸດຜ່ອນຊ່ອງຫວ່າງດ້ານສຶກສາລະຫວ່າງບັນດາ 40 ເມືອງເຫຼົ່ານີ້ ແລະ ບັນດາເມືອງຕ່າງໆໃນທົ່ວປະເທດ (ກະຊວງສຶກສາທິການ ແລະ ກິລາ, 2020, ໜ້າ. 20).

ແຂວງ ສາລະວັນ ເປັນແຂວງໜຶ່ງທີ່ຕັ້ງຢູ່ທາງພາກໃຕ້ຂອງປະເທດລາວເປັນແຂວງທີ່ມີຊາຍແດນຕິດກັບປະເທດໄທ ແລະ ຫວຽດນາມ, ຕິດກັບແຂວງສະຫວັນນະເຂດ, ຈຳປາສັກ ແລະ ເຊກອງ ເປັນແຂວງທີ່ມີປະຊາກອນທີ່ມີຄວາມຫຼາກຫຼາກຊົນເຜົ່າ ແລະ ພາສາປາກເວົ້າ ລວມເຖິງຮີດຄອງ, ປະເພນີ ແລະ ວັດທະນະທຳກໍ່ມີຄວາມແຕກຕ່າງກັນ ປະກອບດ້ວຍ 8 ເມືອງ ຄື: ເມືອງສາລະວັນ, ລະຄອນເພັງ, ວາປີ, ເລົ່າງາມ, ຕຸ້ມລານ, ຕະໂອ້ຍ, ຄົງເຊໂດນ ແລະ ສະໝ້ວຍ ໃນນັ້ນມີ 3 ເມືອງທີ່ເປັນເມືອງທຸກຍາກຫ່າງໄກສອກຫຼີກຕາມການກຳນົດຂອງກະຊວງສຶກສາ ແລະ ກິລາ ກໍ່ຄື: ເມືອງ ລະຄອນເພັງ, ເລົ່າງາມ ແລະ ຕະໂອ້ຍ ແລະ ແຂວງສາລະວັນກໍ່ເປັນແຂວງທີ່ມີອັດຕາການປະລະການຮຽນສູງທີ່ສຸດທຽບໃສ່ທຸກແຂວງໃນປະເທດລາວ ຊຶ່ງສາມາດເຫັນໄດ້ຈາກສະຖິຕິການສຶກສານັບແຕ່ສົກປີ 2015-2016 ນັກຮຽນໃນຊັ້ນມັດທະຍົມຕົ້ນເປັນ ຈຳນວນ 12.3% ສົກປີ 2016-2017 ຈຳນວນ 12.2%, ສົກປີ 2017-2018 ຈຳນວນ 14.5% ສົກປີ 2018-2019 ຈຳນວນ 14.0% ແລະ ສົກປີ 2019-2020 ເພີ່ມຂຶ້ນເປັນ 17.2% ເປັນຍິງ 16.0% ໂດຍສະເພາະແມ່ນຢູ່ໃນຂັ້ນ ຂັ້ນມ.1 ສູງເຖິງ 23.1% (ສູນສະຖິຕິການສຶກສາ ແລະ ກິລາ, 2020) ຊຶ່ງເມືອງເລົ່າງາມກໍ່ເປັນໜຶ່ງເມືອງໜຶ່ງທີ່ນັກຮຽນມີການປະລະການຮຽນທີ່ຢູ່ໃນລະດັບສູງ

ເມື່ອທຽບໃສ່ເມືອງ ຫຼື ແຂວງອື່ນໆ ໂດຍສະເພາະແມ່ນນັກຮຽນໃນຊັ້ນມັດທະຍົມຕອນຕົ້ນທີ່ເຫັນໄດ້ຈາກສະຖິຕິຂອງຫ້ອງການສຶກສາທິການ ແລະ ກິລາເມືອງເລົ່າງາມ ພົບວ່າ ນັບແຕ່ປີ 2019 ອັດຕາການປະລະການຮຽນທົ່ວເມືອງສູງເຖິງ 13.67 ເປີເຊັນ, ປີ 2020 ຕົວເລກຍິ່ງເພີ່ມສູງເຖິງ 19.67 ເປີເຊັນ ແລະ ປີ 2021 ຫຼຸດລົງເຫຼືອ 15.7 ເປີເຊັນ ເຖິງວ່າຈະມີທ່າອ່ຽງຫຼຸດລົງແຕ່ກໍ່ຍັງຖືກວ່າອັດຕາການປະລະຍັງຢູ່ໃນລະດັບຂ້ອນຂ້າງສູງ (ຫ້ອງການສຶກສາທິການ ແລະ ກິລາ ເມືອງເລົ່າງາມ, 2021). ຈາກສະພາບ ແລະ ບັນຫາທີ່ກ່ຽວມາຂ້າງເທິງນັ້ນ, ຈຶ່ງເຮັດໃຫ້ຄະນະຜູ້ຄົ້ນຄວ້າມີຄວາມສົນໃຈຕ້ອງການສຶກສາເຖິງບັນດາປັດໃຈ ແລະ ສາຍເຫດທີ່ພາໃຫ້ນັກຮຽນເພດຍິງໃນຊັ້ນມັດທະຍົມສຶກສາຕອນຕົ້ນປະລະການຮຽນໂດຍສະເພາະແມ່ນຢູ່ໃນເມືອງເລົ່າງາມ ແຂວງສາລະວັນຊຶ່ງເປັນເມືອງທຸກຍາກທີ່ເປັນບູລິມະສິດຕາມທີ່ກະຊວງສຶກສາທິການ ແລະ ກິລາໄດ້ກໍານົດວ່າມີປັດໃຈ ແລະ ສາຍເຫດການປະລະການຮຽນຂອງນັກຮຽນເປັນຄືແນວໃດເພື່ອເປັນຂໍ້ມູນໃນການວາງແຜນ ແລະ ຊອກຫາແນວທາງໃນການຫຼຸດຈໍານວນການປະລະການຮຽນ ແລະ ເພີ່ມອັດຕາເຂົ້າຮຽນຂອງນັກຮຽນເພດຍິງຊັ້ນມັດທະຍົມສຶກສາຕອນຕົ້ນໃນຊັ້ນມັດທະຍົມສຶກສາຕອນຕົ້ນຕໍ່ໄປ.

**ຈຸດປະສົງຂອງການຄົ້ນຄວ້າ**

- ເພື່ອສຶກສາປັດໃຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນໃນເມືອງເລົ່າງາມ ແຂວງສາລະວັນ
- ເພື່ອສຶກສາຂໍ້ສະເໜີແນະໃນການແກ້ໄຂການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນໃນເມືອງເລົ່າງາມ ແຂວງ ສາລະວັນ

**ວິທີການຄົ້ນຄວ້າ**

ການຄົ້ນຄວ້າໃນຄັ້ງນີ້ເພື່ອສຶກສາກ່ຽວກັບການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນໃນເມືອງເລົ່າງາມ ແຂວງ ສາລະວັນ ເປັນການຄົ້ນຄວ້າແບບສໍາຫຼວດຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນເພດຍິງໃນໂຮງຮຽນມັດທະຍົມຕອນຕົ້ນໃນເມືອງເລົ່າງາມ ແຂວງສາລະວັນ ໂດຍນໍາໃຊ້ແບບສອບຖາມ. ຂໍ້ມູນທີ່ເກັບກໍາຮວບຮວມໃນຄັ້ງນີ້ເປັນຂໍ້ມູນແບບປະລິມານ ແລະ ຄຸນນະພາບ.

ປະຊາກອນສໍາລັບການດໍາເນີນການຄົ້ນຄວ້າໃນຄັ້ງນີ້ແມ່ນບໍລິຫານ, ຄູສອນ ແລະ ນັກຮຽນເພດຍິງໃນໂຮງຮຽນມັດທະຍົມຕອນຕົ້ນໃນເມືອງເລົ່າງາມ ແຂວງສາລະວັນ ຈໍານວນ 4 ແຫ່ງ ຄື: ໂຮງຮຽນມັດທະຍົມສຶກສາສົມບູນ ເລົ່າງາມ, ໂຮງຮຽນມັດທະຍົມສຶກສາສົມບູນດົງໃຫຍ່, ໂຮງຮຽນມັດທະຍົມສຶກສາສົມບູນນາບອນ ແລະ ໂຮງຮຽນມັດທະຍົມສຶກສາສົມບູນນາແກໃນເມືອງເລົ່າງາມ ແຂວງສາລະວັນ. ການເລືອກກຸ່ມຕົວຢ່າງແມ່ນນໍາໃຊ້ວິທີການສຸ່ມແບບສຸ່ມແບບບັງເອີນ (Convinience Sampling) ຊຶ່ງໄດ້ ນັກຮຽນທັງໝົດ ຈໍານວນ 334 ຄົນ ແລະ ກຸ່ມຕົວຢ່າງທີ່ເປັນຜູ້ບໍລິຫານ ແລະ ຄູສອນ ຈໍານວນ 51 ຄົນ ໃນສົກຮຽນ 2021-2022.

ການວິເຄາະຂໍ້ມູນໂດຍໃຊ້ໂປຣແກຣມຄອມພິວເຕີສໍາເລັດຮູບເຂົ້າມາຊ່ວຍຕາມຂັ້ນຕອນດັ່ງນີ້: 1) ວິເຄາະຂໍ້ມູນກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມໂດຍຫາຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage) ແລ້ວນໍາສະເໜີເປັນຕາຕະລາງປະກອບຄໍາບັນລະຍາຍ. 2) ວິເຄາະຂໍ້ມູນລະດັບປັດໃຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງຊັ້ນມັດທະຍົມຕອນຕົ້ນໃນເມືອງເລົ່າງາມ ແຂວງສາລະວັນ ທັງໝົດ 4 ດ້ານຄື: ປັດໃຈສ່ວນຕົວຂອງນັກຮຽນ, ປັດໃຈດ້ານສະພາບແວດລ້ອມໃນໂຮງຮຽນ, ປັດໃຈດ້ານສະພາບຄອບຄົວ ແລະ ປັດໃຈດ້ານວັດທະນະທໍາ-ສັງຄົມ ໂດຍຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (s.d) ໂດຍມີເກນແປຄວາມໝາຍ 5 ລະດັບ. 3) ວິເຄາະຂໍ້ມູນຈາກແບບສອບຖາມປາຍເປີດກ່ຽວກັບແນວທາງໃນການແກ້ໄຂການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ ໂດຍນໍາມາວິເຄາະເນື້ອໃນໂດຍການຈັດກຸ່ມຂໍ້ມູນ, ຕີຄວາມໝາຍ ແລະ ຂຽນບັນຍາຍແບບລຽງຄວາມ.

**ຜົນໄດ້ຮັບ**

**ຜົນການວິເຄາະຂອງຂໍ້ມູນຕາມຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ**

ຜູ້ຕອບແບບສອບຖາມທັງໝົດ 51 ທ່ານ ເທົ່າກັບ 100 ສ່ວນຮ້ອຍ, ດ້ານເພດ ເພດຍິງ ມີ 25 ທ່ານເທົ່າກັບ 49.0 ສ່ວນຮ້ອຍ ແລະ ເພດຊາຍ ມີ 26 ທ່ານ ເທົ່າກັບ 51.0 ສ່ວຍຮ້ອຍ; ດ້ານວຸດທິການສຶກສາ ຊັ້ນສູງ ມີ 38 ທ່ານ ເທົ່າກັບ 74.5 ສ່ວນຮ້ອຍ, ປະລິນຍາຕີ ມີ 13 ທ່ານ ເທົ່າກັບ 25.5 ສ່ວນຮ້ອຍ; ດ້ານໜ້າທີ່ຮັບຜິດຊອບ ຜູ້ບໍລິຫານ ມີ 6 ທ່ານ ເທົ່າກັບ 11.8 ສ່ວນຮ້ອຍ, ຄູສອນ ມີ 45 ທ່ານ ເທົ່າກັບ 88.2 ສ່ວນຮ້ອຍ; ດ້ານຊົນເຜົ່າ ລາວລຸ່ມ ມີ 42 ທ່ານ ເທົ່າກັບ 82.4 ສ່ວນຮ້ອຍ, ລະເວນ ມີ 2 ທ່ານ ເທົ່າກັບ 3.9 ສ່ວນຮ້ອຍ, ສ່ວຍ ມີ 5 ທ່ານ ເທົ່າກັບ 9.8 ສ່ວນຮ້ອຍ, ພູໄທ ມີ 2 ທ່ານ ເທົ່າກັບ 3.9 ສ່ວນຮ້ອຍ; ດ້ານໂຮງຮຽນ ມີ ມສ.ເລົ່າງາມ 15 ທ່ານ ເທົ່າກັບ 29.4 ສ່ວນຮ້ອຍ, ມສ.ດົງໃຫຍ່ ມີ 15 ທ່ານ ເທົ່າກັບ 29.4 ສ່ວນຮ້ອຍ, ມສ.ນາບອນ 10 ທ່ານ ເທົ່າກັບ 19.6 ສ່ວນຮ້ອຍ, ມສ.ນາແກ ມີ 11 ທ່ານ ເທົ່າກັບ 21.6 ສ່ວນຮ້ອຍ. ປັດໃຈທີ່ມີຜົນກະທົບຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນໃນເມືອງເລົ່າງາມ ແຂວງ ສາລະວັນ ໂດຍລວມຢູ່ໃນລະດັບໜ້ອຍ ($\bar{X}$ = 1.84 , S.D = 0.48), ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າ ປັດໃຈດ້ານສະພາບຄອບຄົວ ມີຄ່າສະເລ່ຍ

ສູງທີ່ສຸດ ($\bar{X}$ = 2.26 , S.D = 0.83) ຢູ່ໃນລະດັບໜ້ອຍ, ຮອງລົງມາແມ່ນ ປັດໄຈດ້ານສ່ວນຕົວຂອງນັກຮຽນ ($\bar{X}$ = 2.11 , S.D = 0.75) ແລະ ປັດໄຈດ້ານສະພາບແວດລ້ອມໃນໂຮງຮຽນ ($\bar{X}$ = 1.55 , S.D = 0.65) ຢູ່ໃນລະດັບໜ້ອຍ, ສ່ວນດ້ານທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ປັດໄຈດ້ານວັດທະນະທຳ-ສັງຄົມ ($\bar{X}$ = 1.45 , S.D = 0.52) ຢູ່ໃນລະດັບໜ້ອຍສຸດ. ເມື່ອພິຈາລະນາເປັນແຕ່ລະດ້ານຍ່ອຍພົບວ່າ: 1) ປັດໄຈດ້ານສ່ວນຕົວຂອງນັກຮຽນຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ມັກຂາດໂຮງຮຽນ ຢູ່ໃນລະດັບຫຼາຍ ($\bar{X}$ = 3.59 , S.D = 1.29) ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ມີບັນຫາທາງດ້ານຮ່າງກາຍ ເຊັ່ນ: ພິການ ຢູ່ໃນລະດັບໜ້ອຍທີ່ສຸດ ($\bar{X}$ = 1.20, S.D = 0.49). 2) ປັດໄຈດ້ານສະພາບແວດລ້ອມໃນໂຮງຮຽນ ຂໍ້ເຫັນວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ຄູສອນໃນໂຮງຮຽນບໍ່ພຽງພໍ ຢູ່ໃນລະດັບປານກາງ ($\bar{X}$ = 2.63, S.D = 1.53) ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ສະພາບຂອງອາຄານຫ້ອງຮຽນບໍ່ເໝາະສົມ ແລະ ບໍ່ແໜ້ນໜາ ຢູ່ໃນລະດັບໜ້ອຍ ($\bar{X}$ = 1.27, S.D = 0.66). 3) ປັດໄຈດ້ານສະພາບຄອບຄົວ ຂໍ້ເຫັນວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ເປັນຄອບຄົວທຸກຍາກ ຢູ່ໃນລະດັບປານກາງ ($\bar{X}$ = 2.76, S.D = 1.24), ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ເປັນເດັກກຳພ້າ / ກຳພອຍ ຢູ່ໃນລະດັບໜ້ອຍ ($\bar{X}$ = 1.59, S.D = 0.89). 4) ປັດໄຈດ້ານວັດທະນະທຳ-ສັງຄົມ ໂດຍລວມຢູ່ໃນລະດັບໜ້ອຍທີ່ສຸດ ($\bar{X}$ = 1.45, S.D = 0.52), ເມື່ອພິຈາລະນາເປັນແຕ່ລະຂໍ້ເຫັນວ່າຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ເຮືອນຢູ່ຫ່າງໄກຈາກໂຮງຮຽນຫຼາຍເຮັດໃຫ້ຕ້ອງຍ້າຍໂຮງຮຽນ ຫຼື ຍ້າຍບ່ອນຢູ່ ເຫັນວ່າຢູ່ໃນລະດັບປານກາງ ($\bar{X}$ = 2.55, S.D = 1.20) ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ບໍ່ມີໝູ່ເພື່ອນໃນຫ້ອງຮຽນ ຫຼື ບໍ່ຖືກຍອມຮັບຈາກກຸ່ມໝູ່ ຢູ່ໃນລະດັບໜ້ອຍ ($\bar{X}$ = 1.18, S.D = 0.83).

**ຜົນການວິເຄາະຂໍ້ມູນຕາມຄວາມຄິດເຫັນຂອງນັກຮຽນ**

ຜູ້ຕອບແບບສອບຖາມທັງໝົດ 334 ຄົນ ເທົ່າກັບ 100 ສ່ວນຮ້ອຍ, ດ້ານອາຍຸ ອາຍຸຕ່ຳກວ່າ 12 ປີ ມີ 99 ຄົນ ເທົ່າກັບ 29.6 ສ່ວນຮ້ອຍ, ອາຍຸ 13-14 ປີ ມີ 152 ຄົນ ເທົ່າກັບ 45.5 ສ່ວຍຮ້ອຍ ແລະ ອາຍຸ 15 ປີຂຶ້ນໄປ ມີ 83 ຄົນ ເທົ່າກັບ 24.9 ສ່ວນຮ້ອຍ; ດ້ານຊົນເຜົ່າ ລາວລຸ່ມ ມີ 284 ຄົນ ເທົ່າກັບ 85.3 ສ່ວນຮ້ອຍ, ລະເວນ ມີ 15ຄົນ ເທົ່າກັບ 4.5 ສ່ວນຮ້ອຍ, ສ່ວຍ ມີ 15 ຄົນ ເທົ່າກັບ 4.5 ສ່ວນຮ້ອຍ, ຕະໂອ້ຍ ມີ 5 ຄົນ ເທົ່າກັບ 1.5 ສ່ວນຮ້ອຍ,ກະຕ່າງ ມີ 7 ເທົ່າກັບ 2.1 ສ່ວນຮ້ອຍ, ຜູ້ໄທ ມີ 3 ຄົນ ເທົ່າກັບ 0.9 ສ່ວນຮ້ອຍ, ລາວເທີງ ມີ 3 ຄົນ ເທົ່າກັບ 0.9 ສ່ວນຮ້ອຍ, ລາວກາງ ມີ 1 ຄົນ ເທົ່າກັບ 0.3ສ່ວນຮ້ອຍ; ດ້ານຊັ້ນຮຽນ ມ.1 ມີ 85 ຄົນ ເທົ່າກັບ 25.4 ສ່ວນຮ້ອຍ, ມ.2 ມີ 74 ເທົ່າກັບ 22.2 ສ່ວນຮ້ອຍ, ມ.3 ມີ 83 ຄົນ ເທົ່າກັບ 24.9 ສ່ວນຮ້ອຍ, ມ.4 ມີ 92 ຄົນ ເທົ່າກັບ 27.5 ສ່ວນຮ້ອຍ; ດ້ານໂຮງຮຽນ ມສ.ເລົ່າງາມ ມີ 97 ຄົນ ເທົ່າກັບ 29.0 ສ່ວນຮ້ອຍ, ມສ.ດົງໃຫຍ່ ມີ 96 ເທົ່າກັບ 28.7 ສ່ວນຮ້ອຍ, ມສ.ນາບອນ ມີ 68 ຄົນ ເທົ່າກັບ 20.4 ສ່ວນຮ້ອຍ, ມສ.ນາແກ ມີ 73 ຄົນ ເທົ່າກັບ 21.9 ສ່ວນຮ້ອຍ. ປັດໄຈທີ່ມີຜົນກະທົບຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນໃນເມືອງເລົ່າງາມ ແຂວງ ສາລະວັນ ໂດຍລວມຢູ່ໃນລະດັບໜ້ອຍ ($\bar{X}$ = 2.03, S.D = 0.67), ເມື່ອພິຈາລະນາເປັນລາຍດ້ານເຫັນວ່າ ປັດໄຈດ້ານສະພາບຄອບຄົວ ມີຄ່າສະເລ່ຍສູງທີ່ສຸດ ($\bar{X}$ = 2.54, S.D = 1.00) ຢູ່ໃນລະດັບປານກາງ, ຮອງລົງມາແມ່ນ ປັດໄຈດ້ານສ່ວນຕົວຂອງນັກຮຽນ ($\bar{X}$ = 1.98, S.D = 1.01) ແລະ ປັດໄຈດ້ານສະພາບແວດລ້ອມໃນໂຮງຮຽນ ($\bar{X}$ = 1.88, S.D = 0.95) ຢູ່ໃນລະດັບໜ້ອຍ, ສ່ວນດ້ານທີ່ມີ ຄ່າສະເລ່ຍໜ້ອຍຕ່ຳສຸດແມ່ນ ປັດໄຈດ້ານວັດທະນະທຳ-ສັງຄົມ ($\bar{X}$ = 1.70, S.D = 1.00) ຢູ່ໃນລະດັບໜ້ອຍ. ເມື່ອພິຈາລະນາເປັນແຕ່ລະດ້ານຍ່ອຍພົບວ່າ: 1) ປັດໄຈດ້ານສ່ວນຕົວຂອງນັກຮຽນ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ມັກຂາດໂຮງຮຽນ ຢູ່ໃນລະດັບປານກາງ ($\bar{X}$ = 3.43, S.D = 1.54), ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ມີບັນຫາທາງດ້ານຮ່າງກາຍ ເຊັ່ນ: ພິການ ຢູ່ໃນລະດັບໜ້ອຍທີ່ສຸດ ($\bar{X}$ = 1.46, S.D = 1.08). 2) ປັດໄຈດ້ານສະພາບແວດລ້ອມໃນໂຮງຮຽນ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ມີສຽງດັງ ຫຼື ສຽງລົບກວນໃນເວລາຮຽນ ຢູ່ໃນລະດັບປານກາງ ($\bar{X}$ = 2.57, S.D = 1.49) ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ສະພາບຫ້ອງຮຽນມີຄວາມແອອັດ ຫຼື ຄັບແຄບ ຢູ່ໃນລະດັບໜ້ອຍ ($\bar{X}$ = 1.69, S.D = 1.02). 3) ປັດໄຈດ້ານສະພາບຄອບຄົວ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ເປັນຄອບຄົວທຸກຍາກ ຢູ່ໃນລະດັບປານກາງ ($\bar{X}$ = 3.11, S.D = 1.33) ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ເປັນເດັກກຳພ້າ/ກຳພອຍ ຢູ່ໃນລະດັບໜ້ອຍ ($\bar{X}$ = 1.73, S.D = 1.24). 4) ປັດໄຈດ້ານວັດທະນະທຳ-ສັງຄົມ ຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ເຮືອນຢູ່ຫ່າງໄກຈາກໂຮງຮຽນຫຼາຍເຮັດໃຫ້ຕ້ອງຍ້າຍໂຮງຮຽນ ຫຼື ຍ້າຍບ່ອນຢູ່ເຮັດໃຫ້ຕ້ອງຍ້າຍໂຮງຮຽນຢູ່ໃນລະດັບປານກາງ ($\bar{X}$ = 3.11, S.D = 1.50) ສ່ວນຂໍ້ທີ່ມີຄ່າສະເລຍໜ້ອຍກວ່າໝູ່ແມ່ນ ຢູ່ໃນກຸ່ມໝູ່ຕິດຢາເສບຕິດ ແລະ ສິ່ງມຶນເມົາ ຢູ່ໃນລະດັບໜ້ອຍ ($\bar{X}$ = 1.63, S.D = 1.18).

**ຜົນການວິເຄາະຂໍ້ມູນກ່ຽວກັບຂໍ້ສະເໜີແນະການແກ້ໄຂບັນຫາການປະລະການຮຽນຂອງນັກຮຽນເພດຍິງ**

1) ປັດໄຈສ່ວນຕົວຂອງນັກຮຽນ: ວິທີການແກ້ໄຂແມ່ນຄູປະຈຳຫ້ອງຄວນເອົາໃຈໃສ່ຕິດຕາມພຶດຕິກຳການຮຽນຂອງນັກຮຽນຢ່າງໃກ້ຊິດໂດຍສະເພາະນັກຮຽນທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ຄວນລາຍງານໃຫ້ແກ່ຄະນະອຳນວຍການ ແລະ ຜູ້ປົກຄອງຮັບຊາບແຕ່ຕົ້ນເພື່ອໃຫ້ສາມາດຊ່ວຍນັກຮຽນໄດ້. ຄວນໃສ່ລະບຽບດ້ວຍການນຳສິ່ງນັກຮຽນທີ່ປະລະການຮຽນປະກອບເຂົ້າໃນກຳລັງປ້ອງກັນຄວາມສະຫງົບເຂດຫ່າງໄກຊອກຫຼີກໄລຍະໜຶ່ງກ່ອນຈະສາມາດໄປປະກອບອາຊີບອື່ນ.

2) ປັດໄຈດ້ານສະພາບແວດລ້ອມ: ວິທີແກ້ໄຂເພື່ອເປັນການສົ່ງເສີມໃຫ້ນັກຮຽນມາຮຽນເປັນປົກກະຕິ ແລະ ຫຼຸດຜ່ອນຈຳນວນການປະລະການຮຽນໃຫ້ໜ້ອຍລົງຄວນມີສະໜອງປຶ້ມແບບຮຽນ, ອຸປະກອນຮັບໃຊ້ໃນຫ້ອງຮຽນ ແລະ ສິ່ງອຳນວຍຄວາມສະດວກໃນໂຮງຮຽນທີ່ຈຳເປັນໃຫ້ແກ່ນັກຮຽນອາດຈະສາມາດຊ່ວຍດຶງດູດໃຫ້ນັກຮຽນຢາກມາຮຽນ, ຄູຄວນໃຊ້ວິທີການສອນທີ່ຫຼາກຫຼາຍ, ຂຶ້ນຫ້ອງສອນເປັນປົກກະຕິກໍ່ແມ່ນປັດໄຈ ໜຶ່ງທີ່ເຮັດໃຫ້ນັກຮຽນຢາກມາໂຮງຮຽນຖ້າຫາກມາໂຮງຮຽນແລ້ວບໍ່ໄດ້ຮຽນກໍ່ອາດຈະເຮັດໃຫ້ນັກຮຽນບໍ່ຢາກມາຮຽນ

3) ປັດໄຈດ້ານສະພາບຄອບຄົວ: ວິທີການແກ້ໄຂໃຫ້ນັກຮຽນຍັງຄົງຮຽນຈົນຈົບການສຶກສານັ້ນທາງໂຮງຮຽນຄວນຈັດຕັ້ງການປະຖົມນິເທດໃຫ້ຄຳແນະ ນຳກັບຜູ້ປົກຄອງໃນການຈັດສັນເວລາທີ່ເຮັດໃຫ້ນັກຮຽນສາມາດຮຽນ ແລະ ເຮັດວຽກຊ່ວຍຄອບຄົວໄປພ້ອມ. ຄວນມີນະໂຍບາຍຊ່ວຍເຫຼືອໃຫ້ມີການຍົກເວັ້ນຄ່າທຳນຽມຕ່າງໆກໍ່ອາດຈະເປັນການສົ່ງເສີມໃຫ້ນັກຮຽນຍັງສາມາດຮຽນຕໍ່ໄປຈົນຈົບການສຶກສາ.

4) ປັດໄຈດ້ານວັດທະນະທຳ-ສັງຄົມ: ວິທີການແກ້ໄຂໃຫ້ນັກຮຽນສາມາດສືບຕໍ່ຮຽນໄດ້ແມ່ນໂຮງຮຽນອາດຈະຊອກຫາວິທີຊ່ວຍເຫຼືອນັກຮຽນຢູ່ມີເຮືອນຢູ່ໄກໂຮງຮຽນ ຫຼື ຂໍຄວາມຊ່ວຍເຫຼືອຈາກພໍ່ແມ່ປະຊາຊົນທີ່ມີເງື່ອນໄຂປ່ຽນຜຽນກັນຮັບຜິດຊອບໃນການຮັບ-ສົ່ງນັກຮຽນທີ່ມີຄວາມຈຳເປັນກໍ່ອາດຈະເຮັດໃຫ້ນັກຮຽນສາມາດມາຮອດໂຮງຮຽນໄດ້ທັນເວລາ. ຄວນມີລົດຮັບ-ສົ່ງນັກຮຽນກໍ່ຈະຊ່ວຍນັກຮຽນສາມາດເຂົ້າຮຽນທັນເວລາ.

**ການສົນທະນາ**

**ປັດໄຈດ້ານຕົວຂອງນັກຮຽນ** ປັດໄຈດ້ານສະພາບຄອບຄົວແລ້ວກໍ່ແມ່ນປັດໄຈດ້ານຕົວຂອງນັກຮຽນເອງທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຍິງຢູ່ໃນລະດັບໜ້ອຍເຖິງວ່າທຽບໃສ່ເກນຈະຢູ່ໃນລະດັບໜ້ອຍແຕ່ກໍ່ຖືວ່າຫຼາຍຖ້າທຽບເປັນສ່ວນຮ້ອຍຂອງນັກຮຽນທັງໝົດ ເມື່ອພິຈາລະນາເປັນແຕ່ລະຂໍ້ແລ້ວພົບວ່ານັກຮຽນມັກຂາດໂຮງຮຽນ, ມາໂຮງຮຽນຊ້າບໍ່ທັນຕາມໂມງເວລາ ແລະ ອາໄສຢູ່ຫ່າງໄກຈາກໂຮງຮຽນເປັນຕົ້ນທີ່ເປັນສາຍເຫດເຮັດໃຫ້ນັກຮຽນມັດທະຍົມຕົ້ນໃນເມືອງເລົ່າງາມປະລະການຮຽນຊຶ່ງກໍ່ມີຜົນການຄົ້ນຄວ້າກົງກັບ (ກະຊວງສຶກສາທິການ ແລະ ກິລາ, 2022) ທີ່ໄດ້ຄົ້ນພົບວ່າບັນຫາການຂາດຮຽນເປັນສິ່ງທ້າທາຍອັນໜຶ່ງເຮັດໃຫ້ນັກຮຽນປະລະການຮຽນຊຶ່ງການຂາດຮຽນສ່ວນລ້ອນແຕ່ມີສາເຫດນັກຮຽນບາງຄົນຈຳເປັນຕ້ອງຂາດຮຽນເນື່ອງຈາກບັນຫາສຸຂະພາບທີ່ບໍ່ແຂງແຮງ. ນອກຈາກນັ້ນ, ໃນບາງກໍລະນີນັກຮຽນຂາດຮຽນຍ້ອນຄວາມຈຳເປັນຊ່ວຍວຽກຄອບຄົວຈັດແບ່ງພາລະຄ່າໃຊ້ຈ່າຍຂອງຄອບຄົວເພື່ອສົ່ງເສຍອ້າຍເອື້ອຍນ້ອງໃຫ້ໄດ້ເຂົ້າຮຽນ (ກະຊວງສຶກສາທິການ ແລະ ກິລາ, 2022) ພ້ອມທັງສອດຄ່ອງກັບຜົນການຄົ້ນຂອງ (ກະຊວງສຶກສາທິການ ແລະ ກິລາ, 2022) ສາເຫດຂອງການປະລະການຮຽນໂດຍທົ່ວໄປຂອງຊັ້ນມັດທະຍົມສຶກສາຕອນຕົ້ນແມ່ນຄວາມທຸກຍາກມີຄວາມຈຳເປັນຕ້ອງຊ່ວຍວຽກຄອບຄົວ ແລະ ຈັດແບ່ງພາລະຄ່າໃຊ້ຈ່າຍຂອງຄອບຄົວເພື່ອສົ່ງເສຍອ້າຍເອື້ອຍນ້ອງໃຫ້ໄດ້ເຂົ້າຮຽນ ແລະ ຜົນການຄົ້ນຄວ້າຂອງ (Yaojiang Shi et al, 2015) ວ່າ ການປະລະການຮຽນແມ່ນມີຄວາມສຳພັນແບບມີໄນສຳຄັນທາງສະຖິຕິກັບຜົນການຮຽນຕໍ່າ, ຄ່າໃຊ້ຈ່າຍສູງ ແລະ ສະພາບທີ່ມີລາຍຮັບຕໍ່າ.

**ປັດໄຈດ້ານສະພາບຄອບຄົວ :** ສະພາບຄອບຄົວມີຜົນຕໍ່ການປະລະການຮຽນຂອງນັກຮຽນຍິງຢູ່ໃນລະດັບໜ້ອຍແຕ່ເມື່ອທຽບຕາມຄ່າສະເລ່ຍແລ້ວເຫັນວ່າຢູ່ໃນລະດັບສູງກວ່າໝູ່ ແລະ ເມື່ອສັງເກດເປັນລາຍຂໍ້ພົບວ່າສາເຫດທີ່ເຮັດໃຫ້ມີການປະລະການຮຽນຫຼາຍກວ່າໝູ່ແມ່ນມາຈາກຄອບຄົວມີຄວາມທຸກຍາກ, ຊ່ວຍວຽກຄອບຄົວ ຫຼື ຫາເງິນລ້ຽງຄອບຄົວ ແລະ ຄອບຄົວທີ່ມີລູກຫຼາຍຄົນ ຊຶ່ງກໍ່ຄ້າຍຄືກັບຜົນການຄົ້ນຄວ້າຂອງ (ກະຊວງສຶກສາທິການ ແລະ ກິລາ, 2022) ທີ່ໄດ້ສຶກສາການປະລະການຮຽນໃນຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ ໃນ 6 ເມືອງ ຂອງ ສປປ ລາວ ທີ່ມີຜົນການສຶກສາພົບວ່າບັນຫາຂອງການປະລະການຮຽນແມ່ນ ຄວາມທຸກຍາກຂອງຄອບຄົບ ຫຼື ບໍ່ມີເງິນເພື່ອຮຽນ, ໂອກາດອື່ນໆຮັບຈ້າງເຮັດວຽກເປັນລາຍມື້ຍ້ອນຄວາມທຸກຍາກຂອງຄອບຄົວ. ດັ່ງທີ່ສະມາຄົມຈິດຕະວິທະຍາອາເມລິກາ (American Psychology Association:APA, 2014, p. 1) ຍັງໄດ້ລາຍງານຕື່ມວ່າ ປັດໄຈດ້ານຄອບຄົວທີ່ສົ່ງຜົນຕໍ່ການປະລະການຮຽນວ່າຄວາມທຸກຍາກຂອງຄອບຄົວຍັງຄົງຕິດພັນກັບ ອັດຕາການປະລະການຮຽນ, ໃນປີ 2009, ນັກຮຽນລະດັບມັດທະຍົມປາຍຈາກຄອບຄົວທີ່ມີລາຍໄດ້ຕໍ່າ ໄດ້ອອກໂຮງຮຽນຫຼາຍກວ່ານັກຮຽນຈາກຄອບຄົວທີ່ມີລາຍໄດ້ສູງເຖິງ 5 ເທົ່າ. ຫຼັກຖານຢັ້ງຢືນວ່າມີຜູ້ປົກຄອງ ແລະ ຍັງສອດຄ່ອງກັບຜົນການຄົ້ນຂອງ (Mughal, 2020) ທີ່ໄດ້ສຶກສາການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມໃນເຂດຊົນນະບົດ

ໃນປະເທດປາກີສະຖານຈາກທັດສະນະຄະຕິຂອງພໍ່ນັກຮຽນທີ່ປະລະການຮຽນ.

**ປັດໄຈດ້ານສະພາບແວດລ້ອມໃນໂຮງຮຽນ** ຜົນການຄົ້ນຄວ້າໃນຄັ້ງນີ້ຍັງພົບວ່າປັດໄຈດ້ານສະພາບແວດລ້ອມໃນໂຮງຮຽນກໍ່ເປັນອີກປັດໄຈໜຶ່ງທີ່ສົ່ງຜົນໃຫ້ນັກຮຽນຕໍ່ການປະລະການຮຽນຂອງນັກຮຽນຍິງເຖິງວ່າຈະຢູ່ໃນລະດັບໜ້ອຍກໍ່ຕາມ ແຕ່ເມື່ອພິຈາລະນາເປັນແຕ່ລະຂໍ້ແລ້ວພົບວ່າ ການທີ່ມີຄູສອນໃນໂຮງຮຽນບໍ່ພຽງພໍ, ມີເຄື່ອງມື, ອຸປະກອນ ແລະ ສິ່ງອຳນວຍສະດວກໃນການຮຽນບໍ່ພຽງກໍ່ອາດສົ່ງຜົນໃຫ້ນັກຮຽນບໍ່ຢາກຮຽນ ຕາມທີ່ (ເພັນພິໄລ ຣິດທາຄະນານົນ , 2549, ໜ້າ. 172) ໄດ້ກ່າວເຖິງອິດທິພົນຂອງໂຮງຮຽນສົ່ງຜົນຕໍ່ການຮຽນຂອງນັກຮຽນວ່າ ໂຮງຮຽນມີອິດທິພົນຕໍ່ທັດສະນະຄະຕິຂອງເດັກນ້ອຍທີ່ມີຕໍ່ໂຮງຮຽນໂດຍສະເພາະໂຮງຮຽນໃຫຍ່ເຮັດໃຫ້ເດັກມີໂອກາດເຂົ້າຮ່ວມກິດຈະກຳໜ້ອຍກວ່າໂຮງຮຽນຂະໜາດນ້ອຍ ຈົນໄປຮອດຫ້ອງຮຽນຂະໜາດໃຫຍ່ ເດັກກໍ່ຂາດໂອກາດທີ່ຈະຖາມ ຫຼື ຂໍຄວາມຊ່ວຍເຫຼືອຈາກຄູ ຫຼື ໄດ້ຮັບຄວາມສົນໃຈຢ່າງທົ່ວເຖິງສ່ວນໃນໂຮງຮຽນຂະໜາດນ້ອຍເດັກນ້ອຍທຸກຄົນມີສ່ວນຮ່ວມໃນກິດຈະກຳ, ມີໂອກາດທາງດ້ານການສະແດງສິລະປະ ແລະ ກິລາ, ດັ່ງນັ້ນ, ຈຶ່ງພົບວ່າຂະໜາດຂອງໂຮງຮຽນມີອິດທິພົນຕໍ່ເດັກບໍ່ຄືກັນ. ນັກຮຽນທີ່ມັກສະແດງອອກ ແລະ ມີຄວາມສາມາດໜ້ອຍກວ່າຈະຂາດໂອກາດນີ້ສ່ວນຢູ່ໃນໂຮງຮຽນຂະໜາດນ້ອຍ ນັກຮຽນທີ່ມີຄວາມສາມາດໜ້ອຍຍັງໄດ້ຮັບການສະໜັບສະໜູນຫຼາຍກວ່ານັກຮຽນໃນລະດັບດຽວກັນໃນໂຮງຮຽນໃຫຍ່. ແລະ ຄູສອນກໍ່ມີອິດທິພົນຫຼາຍຕໍ່ການຮຽນຂອງນັກຮຽນ, ປະຈຸບັນຄູຈຳນວນໜຶ່ງຍັງບໍ່ເຂົ້າໃຈໜ້າທີ່ຂອງຕົນ, ບໍ່ເອົາໃຈໃສ່ຕໍ່ວຽກງານຂອງຕົນ, ເຮັດໜ້າທີ່ການສອນຍັງບໍ່ທັນໄດ້ດີເທົ່າທີ່ຄວນ (ສົມຕິ ນິນໜຶນໄວ, 2544, ໜ້າ. 65) ສິ່ງເຫຼົ່ານີ້ອາດຈະເຮັດໃຫ້ນັກຮຽນມີທັດສະນະຄະຕິທີ່ບໍ່ດີຕໍ່ກັບໂຮງຮຽນ ແລະ ຕໍ່ກັບຄູໄດ້, ນອກຈາກນັ້ນຜົນການສຶກສາຂອງ (Mughal, 2020) ຍັງໄດ້ສະຫຼຸບວ່າຖ້າຫາກໃນໂຮງຮຽນມີຄູບໍ່ພຽງພໍການເບິ່ງແຍງເອົາໃຈໃສ່ຈາກຄູໃນໂຮງຮຽນອາດບໍ່ທົ່ວເຖິງເຮັດໃຫ້ເປັນປັດໄຈຫຼັກທີ່ກ່ຽວຂ້ອງກັບການປະລະການຮຽນຂອງນັກຮຽນ.

**ປັດໄຈດ້ານວັດທະນະທຳ-ສັງຄົມ** ອີງໃສ່ຜົນການຄົ້ນຄວ້າໃນຄັ້ງນີ້ພົບວ່າປັດໄຈດ້ານວັດທະນະທຳ-ສັງຄົມທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນໂດຍລວມຢູ່ໃນລະດັບໜ້ອຍ ແຕ່ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຂໍ້ທີ່ອິດທິພົນຫຼາຍກວ່າໝູ່ແມ່ນເຮືອນຢູ່ຫ່າງໄກຈາກໂຮງຮຽນຫຼາຍເຮັດໃຫ້ຕ້ອງຍ້າຍໂຮງຮຽນ ຫຼື ຍ້າຍບ່ອນຢູ່, ການເດີນທາງມາຮຽນບໍ່ສະດວກ ຊຶ່ງກໍ່ສອດຄ່ອງກັບຜົນການຄົ້ນຂອງ (ກະຊວງສຶກສາທິການ ແລະ ກິລາ, 2022, ໜ້າ. 37-38) ພົບວ່າໜຶ່ງໃນປັດໄຈຂອງການປະລະການຮຽນຂອງນັກຮຽນໃນຊັ້ນມັດທະຍົມແມ່ນການຍົກຍ້າຍຖິ່ນຖານໃນຈຳນວນເດັກທີ່ ມີອາຍຸຕໍ່າກວ່າ 15 ປີ ມີໜ້ອຍກວ່າ 10% ຢູ່ໃນຕົວເມືອງທີ່ບໍ່ແມ່ນບ້ານເກີດຂອງພວກເຂົາ ໂດຍມີອັດຕາສ່ວນເທົ່າກັນລະຫວ່າງເພດ ຊາຍ ແລະ ເພດຍິງເຖິງຢ່າງໃດກໍ່ຕາມ, ມີພຽງ 6% ຂອງເດັກອາຍຸ 10 ປີ ເທົ່ານັ້ນທີ່ເປັນຄົນເຄື່ອນຍ້າຍບ່ອນທີ່ຢູ່ໃນຂະນະທີ່ຕົວເລກຂອງເດັກອາຍຸ 14 ປີ ໄດ້ເພີ່ມຂຶ້ນ 2 ເທົ່າ ເປັນ 10% ມີການສັນນິຖານວ່າອັນນີ້ຍັງສືບຕໍ່ເພີ່ມຂຶ້ນສຳລັບໄວໜຸ່ມທີ່ມີອາຍຸສູງ ເຫດຜົນຂອງຄອບຄົວທີ່ຈະເຄື່ອນຍ້າຍຖິ່ນຖານບ່ອນຢູ່ຕົ້ນຕໍແມ່ນຍ້ອນເສດຖະກິດ, ການຊອກຫາໂອກາດທີ່ດີກວ່າໃນເຂດຕົວ ເມືອງ ຫຼື ເຂດຊານເມືອງ ໃນຂະນະດຽວກັນກໍໄດ້ລະບຸວ່າການເຄື່ອນຍ້າຍແມ່ນເພື່ອຊອກຫາໂຮງຮຽນທີ່ດີກວ່າສຳລັບລູກຊຶ່ງເປັນປັດໄຈໜຶ່ງເຊັ່ນກັນ.

**ສະຫຼຸບຜົນຄົ້ນຄວ້າ**

ຜົນການຄົ້ນຄວ້າກ່ຽວກັບການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນໃນເມືອງເລົ່າງາມ ແຂວງ ສາລະວັນ,ມີຈຸດປະສົງ 1) ເພື່ອສຶກສາປັດໄຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ ແລະ 2) ເພື່ອສຶກສາຂໍ້ສະເໜີແນະໃນການແກ້ໄຂການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ. ກຸ່ມຕົວຢ່າງຜູ້ບໍລິຫານ-ຄູສອນຈຳນວນ 51 ຄົນ, ນັກຮຽນຈຳນວນ 334 ຄົນ.ເຄື່ອງມືໃນການເກັບຂໍ້ມູນໃນຄັ້ງນີ້ເປັນແບບສອບຖາມ (Questionnaires) ເຊິ່ງປະກອບດ້ວຍ 2 ຊຸດຄື: ຊຸດທີ 1 ສຳລັບຜູ້ບໍລິຫານ ແລະ ຄູສອນ, ຊຸດທີ 2 ສຳລັບນັກຮຽນ. ຜົນການຄົ້ນຄວ້າພົບວ່າ: ຜູ້ບໍລິຫານ ແລະ ຄູສອນສ່ວນຫຼາຍແມ່ນເພດຊາຍ ມີ 26 ທ່ານ ເທົ່າກັບ 51.0 ສ່ວນຮ້ອຍ, ວຸດທິການສຶກສາສ່ວນຫຼາຍແມ່ນຊັ້ນສູງ ມີ 38 ທ່ານ ເທົ່າກັບ 74.5 ສ່ວນຮ້ອຍ, ດ້ານໜ້າທີ່ຮັບຜິດຊອບ ສ່ວນຫຼາຍແມ່ນຄູສອນ ມີ 45 ທ່ານ ເທົ່າກັບ 88.2 ສ່ວນຮ້ອຍ, ດ້ານຊົນເຜົ່າສ່ວນຫຼາຍແມ່ນ ຊົນເຜົ່າ ລາວລຸ່ມ ມີ 42 ທ່ານ ເທົ່າກັບ 82.4 ສ່ວນຮ້ອຍ ແລະ ດ້ານໂຮງຮຽນ ມີ 2 ໂຮງຮຽນເປັນສ່ວນຫຼາຍແມ່ນ ມສ.ເລົ່າງາມ 15 ທ່ານ ເທົ່າກັບ 29.4 ສ່ວນຮ້ອຍ, ມສ.ດົງໃຫຍ່ ມີ 15 ທ່ານ ເທົ່າກັບ 29.4 ສ່ວນຮ້ອຍ. ສຳລັບນັກຮຽນທີ່ຕອບແບບສອບຖາມສ່ວນຫຼາຍແມ່ນອາຍຸ 13-14 ປີ ມີ 152 ຄົນ ເທົ່າກັບ 45.5 ສ່ວນຮ້ອຍ, ດ້ານຊົນເຜົ່າ ສ່ວນຫຼາຍ

ແມ່ນ ຊົນເຜົ່າລາວລຸ່ມ ມີ 284 ຄົນ ເທົ່າກັບ 85.3 ສ່ວນຮ້ອຍ, ດ້ານຊັ້ນຮຽນສ່ວນຫຼາຍແມ່ນ ມ.4 ມີ 92 ຄົນ ເທົ່າກັບ 27.5 ສ່ວນຮ້ອຍ, ດ້ານໂຮງຮຽນສ່ວນຫຼາຍແມ່ນ ມສ.ເລົ່າງາມ ມີ 97 ຄົນ ເທົ່າກັບ 29.0 ສ່ວນຮ້ອຍ. ປັດໄຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ ຕາມຄວາມຄິດເຫັນຂອງຄູສອນໂດຍລວມ ແລະ ແຕ່ລະດ້ານຢູ່ໃນລະດັບໜ້ອຍ ຍົກເວັ້ນດ້ານປັດໄຈດ້ານວັດທະນະທຳ-ສັງຄົມ ແມ່ນຢູ່ໃນລະດັບໜ້ອຍທີ່ສຸດ ສ່ວນປັດໄຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນເພດຍິງ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃນເມືອງເລົ່າງາມ ແຂວງ ສາລະວັນ ຕາມຄວາມຄິດເຫັນຂອງນັກຮຽນພົບວ່າ ໂດຍລວມ ແລະ ທຸກດ້ານຢູ່ໃນລະດັບໜ້ອຍ ຍົກເວັ້ນດ້ານ ປັດໄຈດ້ານສະພາບຄອບຄົວ ແມ່ນຢູ່ໃນລະດັບປານກາງ.

**ຂໍ້ສະເໜີແນະ**

-ຄວນເອົາໃຈໃສ່ຕິດຕາມພຶດຕິກຳຂອງນັກຮຽນທີ່ມັກຂາດໂຮງຮຽນ, ນັກຮຽນທີ່ມີຄວາມຈຳເປັນຕ້ອງຊ່ວຍວຽກຄອບຄົວໃນການສ້າງເສດຖະກິດຄອບຄົວ ລວມທັງນັກຮຽນທີ່ມີພຶດຕິກຳທີ່ບໍ່ເໝາະສົມ ເຊັ່ນ:ໄພສັງຄົມ, ຕິດເກມເປັນໄລຍະແລ້ວລາຍງານຕໍ່ຄະນະອຳນວຍການໂຮງຮຽນເນື່ອງຈາກນັກຮຽນເຫຼົ່ານີ້ມີຄວາມສ່ຽງທີ່ຈະປະລະການຮຽນສູງ.

- ຄວນໃຫ້ຄວາມສຳຄັນໃນການສະໜອງບັນດາເຄື່ອງມື, ອຸປະກອນ ແລະ ສິ່ງອຳນວຍສະດວກໃນການຮຽນບໍ່ພຽງພໍໃນການຈັດການຮຽນ-ການສອນ, ພະຍາຍາມຈັດສັນຄູສອນໃນໂຮງຮຽນໃຫ້ພຽງພໍກັບຈຳນວນຫ້ອງຮຽນ, ພ້ອມທັງປັບປຸງວິທີການສອນຂອງຄູສອນບາງວິຊາໃນໂຮງຮຽນໃຫ້ເໝາະສົມ.

- ຄວນເອົາໃຈໃສ່ລົງໄກ້ສິດຕິດແທດ ແລະ ສຶກສາແນວຄິດໃຫ້ແກ່ນັກຮຽນທີ່ມາຈາກຄອບຄົວທຸກຍາກ, ຄອບ ຄົວທີ່ມີລູກຫຼາຍຄົນ, ນອກຈາກນັ້ນ, ຄວນເອົາໃຈໃສ່ນັກຮຽນທີ່ມີຄວາມຈຳເປັນຕ້ອງຊ່ວຍວຽກຄອບຄົວ ຫຼື ຫາເງິນລ້ຽງຄອບຄົວ.

-ຄວນເອົາໃຈໃສ່ນັກຮຽນຜູ້ທີ່ອາໄສຢູ່ເຮືອນຫ່າງໄກຈາກໂຮງຮຽນຫຼາຍເຮັດໃຫ້ຕ້ອງຍ້າຍໂຮງຮຽນ ຫຼື ຍ້າຍບ່ອນຢູ່ເປັນປະຈຳ, ພ້ອມທັງການເດີນທາງມາຮຽນບໍ່ສະດວກ, ຢູ່ໃນກຸ່ມໝູ່ຕິດຢາເສບຕິດ ແລະ ສິ່ງມຶນເມົາ.

**ເອກະສານອ້າງອີງ**


ກະຊວງສຶກສາທິການ ແລະ ກິລາ. (2015). *ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020).* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025).* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2022). *ການປະລະການຮຽນໃນຊັ້ນປະຖົມສຶກສາ ແລະມັດທະຍົມສຶກສາ ໃນ 6 ເມືອງ ຂອງ ສປປ ລາວ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ສູນສະຖິຕິການສຶກສາ ແລະ ກິລາ. (2020). *ຕາຕະລາງຂໍ້ມູນສົກຮຽນ 2019-2020.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ສັນຕິ ບົນໜຶ່ນໄວ. (2544). *ການພັດທະນາການປະຕິບັດງານສົ່ງເສີມໃຫ້ນັກຮຽນມີວິໄນໂຮງຮຽນໜອງບົວວິທະຍາຄານ ອຳເພີເມືອງຈັງຫວັດໜອງບົວລຳພູ.* ມະຫາສາລະຄາມ: ມະຫາວິທະຍາໄລ ມະຫາສາລະຄາມ.

ຫ້ອງການສຶກສາທິການ ແລະ ກິລາ ເມືອງເລົ່າງາມ. (2021). *ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາປະຈຳສົກຮຽນ 2020-2021 ແລະ ແຜນພັດທະນາການສຶກສາ ແລະ ກິລາປະຈຳສົກຮຽນ 2021-2022.* ສາລະວັນ: ຫ້ອງການສຶກສາທິການ ແລະ ກິລາ ເມືອງເລົ່າງາມ.

ເພັນພິໄລ ຣິດທາຄະນານົນ . (2549). *ພັດທະນາການມະນຸດ.* ກຸງເທບມະຫານະຄອນ: ບໍລິສັດທຳມະດາເພສ ຈຳກັດ.

American Psychology Association:APA. (2014, July 20). *Facing the School Dropout Dilemma. Washington, DC.* Retrived from http://www.apa.org: http://www.apa.org/pi/families/resources/school-dropout-prevention.aspx

Mughal, A. W. (2020). Secondary school students who drop out of school in rural Pakistan: The perspectives of fathers. *EDUCATIONAL RESEARCH*, 1-16.

Yaojiang Shi et al. (2015). Dropping Out of Rural China’s Secondary Schools: A Mixed-methods Analysis. *The China Quarterly*, 1048-1069.